ວາລະສານວິທະຍາສາດສັງຄົມ (ວວສ) ສະບັບທີ 26 ຊຸດທີ 1 (2026) 51-60

ວາລະສານວິທະຍາສາດສັງຄົມ ມະຫາວິທະຍາໄລແຫ່ງຊາດ
ລະຫັດປະຈຳວາລະສານສາກົນ ISSN: 2664-6331 | E-ISSN: 3104-8536
Homepage: https://ssj.sjnl.la/
https://doi.org/10.71026/ss.2026.01006




# ການໝູນໃຊ້ແນວຄິດເສດຖະກິດໃນນິພົນ ໄກສອນ ພົມວິຫານເຂົ້າໃນການຮຽນ-ການສອນ ຢູ່ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ

ໄກສອນ ຈັນສີນາ

ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ (ສມປຊ), ສປປ ລາວ

**ອີເມວ:** k.chansina@gmail.com

**ຂໍ້ມູນບົດຄວາມ:** ວັນທີສົ່ງ 25/11/2025 ວັນທີປັບປຸງ 22/02/2026 ວັນທີຕອບຮັບ 24/01/2026 ວັນທີອອນລາຍ 16/02/2026

**ບົດຄັດຫຍໍ້**

ບົດຄົ້ນຄວ້ານີ້ມີຈຸດປະສົງເພື່ອສັງລວມ ແລະ ວິເຄາະບັນດາເນື້ອໃນພື້ນຖານທິດສະດີແນວຄິດເສດຖະກິດຂອງ ປະທານ ໄກສອນ ພົມວິຫານ ທີ່ປາກົດໃນນິພົນເລືອກເຟັ້ນ ເຫຼັ້ມ 1 ຫາ 4 ເພື່ອຫັນເປັນເນື້ອໃນການຮຽນ-ການສອນທີ່ມີປະສິດທິພາບຢູ່ ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ (ສມປຊ). ເນື້ອໃນສຸມໃສ່ການວິເຄາະນະໂຍບາຍໂຄງປະກອບເສດຖະກິດໃນໄລຍະຂ້າມຜ່ານກ້າວຂຶ້ນສັງຄົມນິຍົມ, ບັນດາພາກສ່ວນເສດຖະກິດ ແລະ ຈິນຕະນາການກ່ຽວກັບການຄຸ້ມຄອງເສດຖະກິດມະຫາພາກ-ຈຸລະພາກ ຜ່ານຂະແໜງການກະສິກຳ, ອຸດສາຫະກຳ ແລະ ການບໍລິການ. ຜົນການສຶກສາພົບວ່າ ສມປຊ ໄດ້ໝູນໃຊ້ແນວຄິດໄກສອນ ພົມວິຫານ ເຂົ້າໃນຫຼັກສູດປະລິນຍາໂທ ແລະ ລະບົບບຳລຸງຢ່າງເປັນລະບົບ, ໂດຍກຳນົດໃຫ້ການໝູນໃຊ້ແນວຄິດນີ້ເປັນພາກບັງຄັບໃນການຮຽນວິທະຍານິພົນ. ຢ່າງໃດກໍຕາມ, ຍັງມີສິ່ງທ້າທາຍດ້ານຮູບແບບການສິດສອນທີ່ຍັງເນັ້ນການບັນຍາຍຝ່າຍດຽວ ແລະ ຄວາມແຕກໂຕນຂອງລະດັບຄວາມຮູ້ພື້ນຖານຂອງນັກສຶກສາ. ບົດຄວາມນີ້ສະເໜີໃຫ້ມີການພັດທະນາຄູ-ອາຈານໃຫ້ກາຍເປັນນັກວິໄຈມືອາຊີບ ແລະ ປັບປຸງຮູບແບບການສອນໃຫ້ທັນສະໄໝ ເພື່ອຮັບມືກັບການປ່ຽນແປງຂອງເສດຖະກິດໂລກໃນຍຸກດິຈິຕອນ.

**ຄຳສັບສຳຄັນ:** ແນວຄິດເສດຖະກິດ; ໄກສອນ ພົມວິຫານ; ການຮຽນ-ການສອນ; ສມປຊ; ໂຄງປະກອບເສດຖະກິດ.

# The Application of Kaysone Phomvihane's Economic Thought from His Writings into Teaching and Learning at the National Academy of Politics and Public Administration

Kaysone Chansina
National Academy of Politics and Public Administration
Email: k.chansina@gmail.com

## Abstract

This research investigates the systematic application of President Kaysone Phomvihane's economic thought, as documented in his Selected Works (Volumes 1-4), into the curricula of the National Academy of Politics and Public Administration (NAPPA). The study examines transition-period policies, multi-sectoral structures, and visions for macro-microeconomic management across sectors like agriculture, industry, and services. Findings reveal that NAPPA has successfully institutionalized these theories, mandating their inclusion in academic theses. However, pedagogical challenges such as traditional lecture methods and disparities in students' backgrounds remain. The paper incorporates a review of both local and international scholarship, recommending faculty development and a shift toward case-study seminars to align socialist economic theory with modern socio-economic complexities and regional integration.

**Keywords:** Economic Thought; Kaysone Phomvihane; Teaching and Learning; NAPPA; Economic Structure.

## **ບົດນຳ**

ແນວຄິດເສດຖະກິດຂອງ ປະທານ ໄກສອນ ພົມວິຫານ ແມ່ນມໍລະດົກທາງປັນຍາທີ່ລ້ຳຄ່າ ແລະ ເປັນເຂັມທິດເຍືອງທາງທີ່ສຳຄັນຍິ່ງໃນພາລະກິດປ່ຽນແປງໃໝ່ຂອງພັກ ແລະ ລັດເຮົາ. ນັບຕັ້ງແຕ່ປະເທດຊາດໄດ້ຮັບການປົດປ່ອຍຢ່າງສົມບູນໃນປີ 1975, ສປປ ລາວ ໄດ້ກ້າວເຂົ້າສູ່ໄລຍະໃໝ່ແຫ່ງການປົກປັກຮັກສາ ແລະ ສ້າງສາປະເທດຊາດ ບົນພື້ນຖານທິດສະດີລັດທິມາກ-ເລນິນ. ໃນໄລຍະເບື້ອງຕົ້ນຂອງການສ້າງຕັ້ງລະບອບໃໝ່ (1975-1985), ຍ້ອນສະພາວະສົງຄາມທີ່ຫາກໍສິ້ນສຸດລົງ ແລະ ຄວາມຕ້ອງການໃນການລວມສູນຊັບພະຍາກອນເພື່ອຟື້ນຟູປະເທດ, ພວກເຮົາໄດ້ນຳໃຊ້ກົນໄກເສດຖະກິດລວມສູນອາດຍາສິດ ເກື້ອກູນ. ກົນໄກດັ່ງກ່າວແມ່ນມີຄວາມຈຳເປັນໃນເວລານັ້ນເພື່ອຄວາມຢູ່ລອດຂອງຊາດ ແລະ ເພື່ອຮັບປະກັນການແຈກຢາຍສະບຽງອາຫານໃຫ້ທົ່ວເຖິງ, ແຕ່ເມື່ອເວລາຜ່ານໄປ, ມັນໄດ້ກາຍເປັນຂໍ້ຜູກມັດທີ່ບີບຮັດກຳລັງການຜະລິດ, ເຮັດໃຫ້ເສດຖະກິດຢຸດສະງັກ ແລະ ບໍ່ສາມາດຕອບສະໜອງຄວາມຕ້ອງການດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນໄດ້ຢ່າງພຽງພໍ, ດ້ວຍວິໄສທັດທີ່ກວ້າງໄກ ແລະ ຄວາມກ້າຫານທາງດ້ານທິດສະດີ, ປະທານ ໄກສອນ ພົມວິຫານ ໄດ້ຄົ້ນຄວ້າ ແລະ ສັງເກດຄວາມເປັນຈິງຂອງສັງຄົມລາວຢ່າງເລິກເຊິ່ງ. ເພິ່ນໄດ້ຄົ້ນພົບວ່າການກ້າວຂຶ້ນສູ່ສັງຄົມນິຍົມໃນປະເທດທີ່ມີພື້ນຖານເສດຖະກິດຫຼ້າຫຼັງນັ້ນ ບໍ່ສາມາດດຳເນີນໄປແບບຟ້າວັ່ງ ຫຼື ໃຊ້ວິທີ "ໂດດຂັ້ນ" ໂດຍບໍ່ຄຳນຶງເຖິງກົດເກນພາວະວິໄສໄດ້. ໃນກາງຊຸມປີ 1980, ເພິ່ນໄດ້ລິເລີ່ມ "ຈິນຕະນາການໃໝ່" ໂດຍສະເພາະແມ່ນການປະຕິຮູບເສດຖະກິດທີ່ຮູ້ຈັກກັນໃນນາມ "ກົນໄກເສດຖະກິດໃໝ່, ເຊິ່ງໄດ້ຮັບການຮັບຮອງໃນກອງປະຊຸມໃຫຍ່ຄັ້ງທີ IV ຂອງພັກ ໃນປີ 1986. ແນວຄິດຂອງເພິ່ນບໍ່ໄດ້ຢຸດຢູ່ພຽງແຕ່ການປ່ຽນແປງນະໂຍບາຍການບໍລິຫານຊົ່ວຄາວ, ແຕ່ແມ່ນການ "ບຸກທະລຸ" ທາງດ້ານທິດສະດີເສດຖະສາດການເມືອງທີ່ມີລັກສະນະ "ຊາດລາວ" ຢ່າງແທ້ຈິງ ໂດຍການໝູນໃຊ້ລັດທິມາກ-ເລນິນ ເຂົ້າກັບຈຸດພິເສດຂອງເສດຖະກິດລາວ ທີ່ມີລັກສະນະເປັນເສດຖະກິດທຳມະຊາດ ແລະ ເຄິ່ງທຳມະຊາດ(ໄກສອນ ພົມວິຫານ, 1985-2010).

ຫຼັກການພື້ນຖານທີ່ ປະທານ ໄກສອນ ພົມວິຫານ ໄດ້ວາງໄວ້ແມ່ນ: “ເສດຖະກິດອັນໃດກໍ່ເຄື່ອນໝູນໄປຕາມບັນດາກົດເກນພາວະວິໄສຂອງມັນ. ສິ່ງເຫຼົ່າໃດ ເລັ່ງທວງການນຳພາ, ການຄຸ້ມຄອງເສດຖະກິດຕ້ອງດຳເນີນດ້ວຍມາດຕະເກນເສດຖະກິດເປັນຕົ້ນຕໍ”. ການກຳນົດດັ່ງກ່າວຖືກຕີລາຄາໂດຍກີແກ້ວ ໄຂຄຳພິທູນ ວ່າແມ່ນການປະກາດຈຸດຢືນທີ່ປ່ຽນແປງຈາກການຄຸ້ມຄອງແບບ "ຄຳສັ່ງອັດຕະວິໄສ" ໄປສູ່ການເຄົາລົບ "ກົດເກນເສດຖະກິດສິນຄ້າ" ເຊິ່ງຖືເປັນບາດກ້າວບຸກທະລຸທາງຈິນຕະ

ນາການທີ່ສຳຄັນຂອງພັກ. ໃນຂະນະດຽວກັນ, ພັນ ພົມມະໄຊ ໄດ້ວິເຄາະວ່າສິ່ງນີ້ແມ່ນການຫັນປ່ຽນຢ່າງມີວິທະຍາສາດ ຈາກເສດຖະກິດທຳມະຊາດໄປສູ່ເສດຖະກິດສິນ ຄ້າ ເພື່ອປົດປ່ອຍກຳລັງການຜະລິດ. ຄວາມສຳຄັນຂອງການນຳໃຊ້ເສດຖະກິດຫຼາຍພາກສ່ວນ ແລະ ການເປີດກວ້າງການພົວ ພັນກັບຕ່າງປະເທດ ເພື່ອດຶງດູດທຶນຮອນ ແລະ ເຕັກໂນໂລຊີ ຍັງສອດຄ່ອງກັບທັດສະນະຂອງ Yves Bourdet ທີ່ຊີ້ໃຫ້ເຫັນວ່າ ແນວຄິດນີ້ຊ່ວຍໃຫ້ ສປປ ລາວ ສາມາດເຊື່ອມໂຍງກັບເສດ ຖະກິດພາກພື້ນໄດ້ຢ່າງວ່ອງໄວ. ນອກຈາກນີ້, Martin Stuart-Fox ຍັງໄດ້ຢັ້ງຢືນວ່າ ການທີ່ເພິ່ນສອນໃຫ້ພວກເຮົາ "ກຳແໜ້ນຈຸດພິເສດຂອງຊາດ" ເພື່ອວາງແນວທາງໃຫ້ຖືກຕ້ອງ ໂດຍບໍ່ຄັດລອກແບບຢ່າງຈາກຕ່າງປະເທດແບບກົນຈັກນັ້ນແມ່ນການ ສະແດງເຖິງວິໄສທັດຂອງນັກຍຸດທະສາດທີ່ສຸຂຸມ ໂດຍອີງໃສ່ຄວາມເປັນຈິງພາຍໃນ ແລະ ສະພາວະຂອງໂລກ (Stuart-Fox, M, 2008).

ໃນໄລຍະຂ້າມຜ່ານກ້າວຂຶ້ນສັງຄົມນິຍົມ, ແນວຄິດຂອງເພິ່ນກ່ຽວກັບ "3 ຜົນປະໂຫຍດ" (ຜົນປະໂຫຍດສ່ວນຕົວ, ລວມໝູ່ ແລະ ລັດ) ແມ່ນຫົວໃຈສຳຄັນຂອງການຈັດຕັ້ງຄຸ້ມຄອງ. ເພິ່ນເນັ້ນໜັກວ່າ ຖ້າບໍ່ສາມາດຮັບປະກັນຜົນປະໂຫຍດຂອງຜູ້ອອກແຮງງານໄດ້, ພວກເຮົາກໍບໍ່ສາມາດສ້າງກຳລັງຊຸກດັນໃຫ້ແກ່ການຜະລິດໄດ້ຢ່າງຍືນຍົງ. ນອກຈາກນັ້ນ, ຈິນຕະນາການຂອງເພິ່ນກ່ຽວກັບການຫັນເປັນອຸດສະຫະກຳ ແລະ ທັນສະໄໝ ໂດຍເລີ່ມຈາກພື້ນຖານກະສິກຳ-ປ່າໄມ້ ກໍຍັງແມ່ນຍຸດທະສາດທີ່ຖືກຕ້ອງ ແລະ ສອດຄ່ອງກັບເງື່ອນໄຂຕົວຈິງຂອງ ສປປ ລາວ ມາຈົນເຖິງປັດຈຸບັນ. ຄວາມຈຳເປັນຂອງການສຶກສາແນວຄິດ ໄກສອນ ພົມວິຫານ ໃນປັດຈຸບັນແມ່ນມີຄວາມສຳຄັນຢ່າງຍິ່ງ ເມື່ອໂລກພວມປະເຊີນກັບສິ່ງທ້າທາຍໃໝ່ທາງດ້ານເສດຖະກິດມະຫາພາກ ເຊັ່ນ: ບັນຫາເງິນເຟີ້ທີ່ຮຸນແຮງ, ຄວາມຜັນຜວນຂອງອັດຕາແລກປ່ຽນ ແລະ ພາລະໜີ້ສິນສາກົນ. ພວກເຮົາຈຳເປັນຕ້ອງໄດ້ທົບທວນຄືນວິທີວິທະຍາຂອງເພິ່ນໃນການວິເຄາະບັນຫາ ເພື່ອຊອກຫາທາງອອກທີ່ເໝາະສົມໃຫ້ແກ່ປະເທດຊາດ (ຄະນະບໍລິຫານງານສູນກາງພັກ, 1986).

ແນວຄິດຂອງເພິ່ນບໍ່ແມ່ນສິ່ງທີ່ຕາຍຕົວ, ແຕ່ແມ່ນ "ວິທີຄິດທີ່ປະດິດສ້າງ" ເຊິ່ງຮຽກຮ້ອງໃຫ້ພວກເຮົາຕ້ອງຮູ້ຈັກປັບປ່ຽນໃຫ້ທັນກັບຍຸກສະໄໝ ໂດຍບໍ່ປະລະຫຼັກການພື້ນຖານຂອງພັກ ແລະ ເປົ້າໝາຍສັງຄົມນິຍົມ. ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ (ສມປຊ) ໃນນາມເປັນສູນກາງການສ້າງພະນັກງານນຳພາ-ຄຸ້ມຄອງ ແລະ ນັກທິດສະດີຂອງພັກ, ໄດ້ຖືເອົາການສຶກສາຄົ້ນຄວ້າ ແລະ ຖ່າຍທອດແນວຄິດຂອງເພິ່ນ ເປັນ "ພັນທະ ແລະ ໜ້າທີ່ອັນສັກສິດ". ການໝູນໃຊ້ແນວຄິດເສດຖະກິດໃນນິພົນ ໄກສອນ ພົມວິຫານ ເຂົ້າໃນຫຼັກສູດການຮຽນ-ການສອນ ບໍ່ພຽງແຕ່ແມ່ນການສອນທິດສະດີປະຫວັດສາດ, ແຕ່ແມ່ນການສ້າງ "ພື້ນຖານແນວຄິດ" ແລະ "ວິໄສທັດເສດຖະກິດ" ທີ່ຖືກຕ້ອງໃຫ້ແກ່ຖັນແຖວພະນັກງານຫຼັກແຫຼ່ງ, ມັນແມ່ນການປູກຝັງສະຕິປັນຍາ ເພື່ອໃຫ້ນັກສຶກສາສາມາດນຳໄປຜັນຂະຫຍາຍເຂົ້າໃນວຽກງານບໍລິຫານລັດ ແລະ ບໍລິຫານເສດຖະກິດ-ສັງຄົມຢູ່ທ້ອງຖິ່ນ ແລະ ຂະແໜງການຂອງຕົນໄດ້ຢ່າງມີປະສິດທິພາບ. ສມປຊ ໄດ້ພະຍາຍາມຫັນເອົາບັນດາທິດສະດີທີ່ເລິກເຊິ່ງເຫຼົ່ານັ້ນ ມາເປັນບົດຮຽນທີ່ສາມາດຈັບຕ້ອງໄດ້ ແລະ ນຳໄປໃຊ້ແກ້ໄຂບັນຫາຕົວຈິງໄດ້. ເຖິງຢ່າງໃດກໍຕາມ, ຜ່ານພຶດຕິກຳການສິດສອນຕົວຈິງຢູ່ ສມປຊ ໃນໄລຍະຜ່ານມາ, ພວກເຮົາກໍພົບເຫັນທັງດ້ານດີທີ່ຄວນສົ່ງເສີມ ແລະ ຂໍ້ຄົງຄ້າງທີ່ຕ້ອງໄດ້ຮັບການປັບປຸງ. ສິ່ງທ້າທາຍອັນໃຫຍ່ຫຼວງແມ່ນການເຮັດແນວໃດໃຫ້ "ທິດສະດີ" ທີ່ອຸດົມສົມບູນໃນນິພົນຂອງເພິ່ນ ສາມາດເຊື່ອມໂຍງກັບ "ພຶດຕິກຳ" ຂອງເສດຖະກິດຕະຫຼາດໃນຍຸກດິຈິຕອນໄດ້ຢ່າງກົມກຽວ (ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ, 2021).

ເຖິງຢ່າງໃດກໍຕາມ, ຜ່ານພຶດຕິກຳການສິດສອນຕົວຈິງຢູ່ ສມປຊ ໃນໄລຍະຜ່ານມາ, ພວກເຮົາກໍພົບເຫັນທັງດ້ານດີທີ່ຄວນສົ່ງເສີມ ແລະ ຂໍ້ຄົງຄ້າງທີ່ຕ້ອງໄດ້ຮັບການປັບປຸງ. ສິ່ງທ້າທາຍອັນໃຫຍ່ຫຼວງແມ່ນການເຮັດແນວໃດໃຫ້ "ທິດສະດີ" ທີ່ອຸດົມສົມບູນໃນນິພົນຂອງເພິ່ນ ສາມາດເຊື່ອມໂຍງກັບ "ພຶດຕິກຳ" ຂອງເສດຖະກິດຕະຫຼາດໃນຍຸກດິຈິຕອນໄດ້ຢ່າງກົມກຽວ (ທອງສະລິດ ມັງໜໍ່ເມກ, 2018).

## ຈຸດປະສົງ

ບົດຄົ້ນຄວ້ານີ້ໄດ້ຖືກກຳນົດຂຶ້ນໂດຍມີຈຸດປະສົງຕົ້ນຕໍ 4 ປະການດັ່ງນີ້:

1. ເພື່ອສັງລວມພື້ນຖານທິດສະດີ, ກົດເກນເສດຖະກິດ ແລະ ນະໂຍບາຍໂຄງປະກອບເສດຖະກິດທີ່ປາກົດໃນນິພົນ

ເລືອກເຟັ້ນຂອງ ປະທານ ໄກສອນ ພົມວິຫານ ເຫຼັ້ມ 1 ຫາ 4.

2. ເພື່ອວິເຄາະຄວາມໝາຍ ແລະ ຄວາມສຳຄັນຂອງ 5 ພາກສ່ວນເສດຖະກິດ ແລະ ໂຄງປະກອບຂະແໜງການໃນໄລຍະຂ້າມຜ່ານກ້າວຂຶ້ນສັງຄົມນິຍົມ ບົນພື້ນຖານການປ່ຽນແປງຈິນຕະນາການໃໝ່.
3. ເພື່ອຕີລາຄາສະພາບການໝູນໃຊ້ແນວຄິດດັ່ງກ່າວເຂົ້າໃນຫຼັກສູດການຮຽນ-ການສອນ ແລະ ວຽກງານຄົ້ນຄວ້າວິທະຍາສາດຢູ່ ສມປຊ ໃນໄລຍະຜ່ານມາ ເພື່ອເບິ່ງເຖິງຈຸດດີ ແລະ ຈຸດບົກພ່ອງ.
4. ເພື່ອວິເຄາະຂໍ້ຄົງຄ້າງ, ສິ່ງທ້າທາຍຕົວຈິງ ແລະ ສະເໜີທິດທາງການປັບປຸງການໝູນໃຊ້ແນວຄິດເສດຖະກິດໃຫ້ມີປະສິດທິພາບສູງຂຶ້ນໃນຕໍ່ໜ້າ ໂດຍສະເພາະແມ່ນການພັດທະນາບຸກຄະລາກອນຄູ ແລະ ຮູບແບບການສອນ ໃຫ້ສອດຄ່ອງກັບຄວາມຕ້ອງການຂອງສັງຄົມ.

**ທົບທວນວັນນະກຳ ແລະ ບົດຄົ້ນຄວ້າທີ່ກ່ຽວຂ້ອງ**

ການສຶກສາແນວຄິດເສດຖະກິດຂອງ ປະທານ ໄກສອນ ພົມວິຫານ ຮຽກຮ້ອງໃຫ້ມີການທົບທວນບັນດາແນວຄິດຈາກນັກວິຊາການ ແລະ ຜູ້ນຳທິດສະດີທີ່ສຳຄັນ ທັງພາຍໃນ ແລະ ຕ່າງປະເທດ ດັ່ງນີ້:

**ທັດສະນະນັກວິຊາການຕໍ່ແນວຄິດປະທານໄກສອນ**

ໃນນິພົນເລືອກເຟັ້ນ, ເພິ່ນໄດ້ວາງທິດສະດີ "ເສດຖະກິດຫຼາຍພາກສ່ວນ" ແລະ "ກົນໄກເສດຖະກິດໃໝ່". ແນວຄິດຫຼັກຂອງເພິ່ນແມ່ນການເຄົາລົບກົດເກນພາວະວິໄສ ແລະ ການນຳໃຊ້ມາດຕະເກນເສດຖະກິດສິນຄ້າ ເພື່ອປົດປ່ອຍກຳລັງການຜະລິດ. ເພິ່ນເນັ້ນວ່າ ລັດທິສັງຄົມນິຍົມບໍ່ແມ່ນການແຈກຢາຍຄວາມທຸກຍາກ, ແຕ່ແມ່ນການສ້າງຄວາມຮັ່ງມີບົນພື້ນຖານຄວາມເປັນທຳ ແລະ ຄວາມປອງດອງຊາດ.

ພັນ ພົມມະໄຊ (ທິດສະດີການຫັນປ່ຽນ): ທ່ານໄດ້ວິເຄາະວ່າ ແນວຄິດຂອງປະທານ ໄກສອນ ແມ່ນການຫັນປ່ຽນຢ່າງມີວິທະຍາສາດ ຈາກເສດຖະກິດທຳມະຊາດທີ່ກຸ້ມຕົນເອງໄປສູ່ເສດຖະກິດສິນຄ້າ. ທ່ານເນັ້ນວ່າ ສິ່ງນີ້ແມ່ນເງື່ອນໄຂເບື້ອງຕົ້ນທີ່ຂາດບໍ່ໄດ້ ສຳລັບປະເທດທີ່ຫຼ້າຫຼັງໃນການກ້າວຂຶ້ນສູ່ສັງຄົມນິຍົມ ໂດຍບໍ່ຜ່ານໄລຍະຂະຫຍາຍຕົວຂອງທຶນນິຍົມແບບເຕັມຮູບແບບ.

ກິແກ້ວ ໄຂຄຳພິທູນ (ທິດສະດີຈິນຕະນາການໃໝ່): ທ່ານໄດ້ສຶກສາລົງເລິກກ່ຽວກັບ "ບາດກ້າວບຸກທະລຸທາງຈິນຕະນາການ" ຂອງປະທານ ໄກສອນ. ທ່ານຊີ້ໃຫ້ເຫັນວ່າຈິນຕະນາການໃໝ່ທາງດ້ານເສດຖະກິດແມ່ນຫົວໃຈສຳຄັນຂອງພາລະກິດປ່ຽນແປງໃໝ່, ເຊິ່ງຮຽກຮ້ອງໃຫ້ມີການປະລະລັດທິຄຳສັ່ງ ແລະ ຫັນມາເຄົາລົບກົດເກນພາວະວິໄສຂອງເສດຖະກິດສິນຄ້າຢ່າງເດັດຂາດ.

Martin Stuart-Fox (ປະຫວັດສາດການເມືອງ-ເສດຖະກິດລາວ): ນັກວິຊາການທ່ານນີ້ໄດ້ຕີລາຄາວ່າ ປະທານ ໄກສອນ ພົມວິຫານ ແມ່ນນັກຍຸດທະສາດທີ່ສຸຂຸມ. ທ່ານວິເຄາະວ່າການຫັນປ່ຽນສູ່ NEM ໃນປີ 1986 ແມ່ນຜົນມາຈາກການກຳແໜ້ນສະພາບການໂລກ ແລະ ຄວາມເປັນຈິງພາຍໃນ, ເຊິ່ງຊ່ວຍໃຫ້ລາວສາມາດຮັກສາສະຖຽລະພາບທາງການເມືອງໄປພ້ອມກັບການປະຕິຮູບເສດຖະກິດ ໂດຍບໍ່ເຮັດໃຫ້ສັງຄົມເກີດຄວາມວຸ່ນວາຍ.

Yves Bourdet (ການຫັນປ່ຽນເສດຖະກິດໃນລາວ): ທ່ານໄດ້ສຶກສາກ່ຽວກັບການຫັນປ່ຽນເສດຖະກິດຂອງລາວໃນທົດສະວັດ 1990. ທ່ານຊີ້ໃຫ້ເຫັນວ່າ ແນວຄິດ "ເສດຖະກິດຫຼາຍພາກສ່ວນ" ຂອງປະທານ ໄກສອນ ໄດ້ຊ່ວຍໃຫ້ ສປປ ລາວ ສາມາດເຊື່ອມໂຍງກັບເສດຖະກິດພາກພື້ນອາຊຽນໄດ້ຢ່າງວ່ອງໄວ ແລະ ສ້າງກຳລັງຊຸກດັນໃຫ້ແກ່ການສົ່ງອອກ ໂດຍສະເພາະໃນຂະແໜງພະລັງງານ ແລະ ຊັບພະຍາກອນທຳມະຊາດ.

Phouphet Kyophilavong (ສະຖຽລະພາບເສດຖະກິດມະຫາພາກ): ທ່ານໄດ້ວິເຄາະແນວຄິດການປະຕິຮູບຂອງປະທານ ໄກສອນ ໃນແງ່ຂອງການສ້າງພື້ນຖານໂຄງລ່າງ ແລະ ການຄຸ້ມຄອງເງິນຕາ. ທ່ານຢັ້ງຢືນວ່າທິດສະດີການປະສານສົມທົບຜົນປະໂຫຍດທີ່ປະທານວາງໄວ້ ຍັງແມ່ນເຂັມທິດສຳຄັນໃນການແກ້ໄຂບັນຫາເງິນເຟີ້ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ຄ່າເງິນກີບໃນປັດຈຸບັນ.

**ວິທີການສຶກສາ**

ບົດຄົ້ນຄວ້ານີ້ໃຊ້ວິທີການສຶກສາແບບຄຸນນະພາບ ໂດຍເນັ້ນໃສ່ 3 ວິທີການຫຼັກ: ກ່ອນອື່ນແມ່ນ**ວິທີວິໄຈເອກະສານ** ໂດຍການສຶກສາ ແລະ ສັງເຄາະຂໍ້ມູນຈາກນິພົນເລືອກເຟັ້ນ ເຫຼັ້ມ 1 ຫາ 4, ບົດລາຍງານການເມືອງຂອງຄະນະບໍລິຫານງານສູນກາງພັກ ທີ່ເພິ່ນເປັນຜູ້ນຳສະເໜີ ແລະ ບົດປະກອບຄຳເຫັນໃນຂົງເຂດເສດຖະກິດແຕ່ລະໄລຍະ. ຖັດມາແມ່ນ **ວິທີວິເຄາະເນື້ອໃນ**ຂອງຫຼັກສູດການຮຽນ-ການສອນຢູ່ ສມປຊ ທັງລະບົບກໍ່ສ້າງ

ປະລິນຍາໂທ ແລະ ລະບົບບຳລຸງ ເພື່ອເບິ່ງສັດສ່ວນ ແລະ ຄວາມເລິກເຊິ່ງຂອງເນື້ອໃນທີ່ນຳໃຊ້. ສຸດທ້າຍແມ່ນ **ວິທີການສັງເກດ ແລະ ຕີລາຄາຜົນ** ຜ່ານການວິເຄາະວິທະຍານິພົນ ແລະ ບົດຈົບຊັ້ນຂອງນັກສຶກສາໃນໄລຍະ 5 ປີ ຜ່ານມາ ເພື່ອວັດແທກລະດັບຄວາມເຂົ້າໃຈ ແລະ ການປະຍຸກໃຊ້ທິດສະດີເຂົ້າໃນການແກ້ໄຂບັນຫາຕົວຈິງ.

**ຜົນການສຶກສາ**

**1. ພື້ນຖານທິດສະດີ ແລະ ກົດເກນເສດຖະກິດ ໃນນິພົນເລືອກເຟັ້ນ ເຫຼັ້ມ 1-4**

ນິພົນເລືອກເຟັ້ນ ເຫຼັ້ມ 1 ຫາ 4 ແມ່ນການປະມວນເອົາບົດຂຽນ, ບົດປາໄສ ແລະ ຄຳສັ່ງແນະນຳ ທີ່ກວມເອົາໄລຍະແຫ່ງການຕໍ່ສູ້ກູ້ຊາດ ຈົນເຖິງການສະຖາປະນາ ສປປ ລາວ ແລະ ການເລີ່ມຕົ້ນພາລະກິດປົກປັກຮັກສາ ແລະ ສ້າງສາລະບອບໃໝ່. ຜົນການສຶກສາສາມາດຂະຫຍາຍອອກເປັນ 3 ປະເດັນຫຼັກ ດັ່ງນີ້:

**1.1 ການໝູນໃຊ້ກົດເກນພາວະວິໄສ ກ່ຽວກັບຄວາມສອດຄ່ອງຂອງການພົວພັນການຜະລິດ**

ໃນໄລຍະນີ້, ປະທານ ໄກສອນ ພົມວິຫານ ໄດ້ວາງຮາກຖານທິດສະດີທີ່ສຳຄັນທີ່ສຸດ ຄືການວິໄຈສະພາບຄວາມເປັນຈິງຂອງກຳລັງການຜະລິດໃນລາວ:

ການວິໄຈລະດັບການຂະຫຍາຍຕົວ: ເພິ່ນຊີ້ໃຫ້ເຫັນວ່າ ກຳລັງການຜະລິດຂອງລາວຍັງຢູ່ໃນລະດັບຕໍ່າ, ກະແຈກກະຈາຍ ແລະ ມີລັກສະນະທຳມະຊາດ (Subsistence Economy). ດັ່ງນັ້ນ, ການຈະສ້າງ "ການພົວພັນການຜະລິດສັງຄົມນິຍົມ" ຈະຕ້ອງດຳເນີນໄປຢ່າງເປັນບາດກ້າວ, ບໍ່ສາມາດໃຊ້ອຳນາດບໍລິຫານເພື່ອບັງຄັບໃຫ້ກາຍເປັນສັງຄົມນິຍົມແບບຟ້າວຟັ່ງໄດ້.

ການປົດປ່ອຍກຳລັງການຜະລິດ: ເພິ່ນໄດ້ເນັ້ນວ່າ "ການປະຕິວັດແມ່ນການປົດປ່ອຍກຳລັງການຜະລິດ". ໃນນິພົນເຫຼັ້ມ 3 ແລະ 4, ເພິ່ນເລີ່ມສະແດງທັດສະນະວ່າ ຕ້ອງນຳໃຊ້ທຸກຮູບແບບການກຳມະສິດ ແລະ ທຸກຮູບແບບການຈັດຕັ້ງການຜະລິດທີ່ສອດຄ່ອງ ເພື່ອເຮັດໃຫ້ຄົນຢາກຜະລິດ, ກ້າລົງທຶນ ແລະ ສ້າງຜະລິດຕະພັນອອກສູ່ສັງຄົມໃຫ້ຫຼາຍທີ່ສຸດ.

ບົດຮຽນການຂ້າມຜ່ານ: ເພິ່ນໄດ້ສ້າງທິດສະດີ "ການກ້າວຂຶ້ນສັງຄົມນິຍົມໂດຍບໍ່ຜ່ານໄລຍະຂະຫຍາຍຕົວຂອງທຶນນິຍົມ" ໂດຍການໝູນໃຊ້ທິດສະດີຂອງ ເລນິນ ກ່ຽວກັບເສດຖະກິດໄລຍະຂ້າມຜ່ານ ມາປັບໃຫ້ແທດເໝາະກັບປະເທດທີ່ມີພື້ນຖານກະສິກຳຫຼ້າຫຼັງ.

**1.2 ຍຸດທະສາດ "ກະສິກຳ-ປ່າໄມ້ ເປັນພື້ນຖານ" ແລະ ການສ້າງໂຄງປະກອບເສດຖະກິດເບື້ອງຕົ້ນ**

ນີ້ແມ່ນຈຸດເດັ່ນຂອງຍຸດທະສາດເສດຖະກິດທີ່ປາກົດຊັດເຈນໃນນິພົນເຫຼັ້ມ 4 (ໄລຍະກອງປະຊຸມໃຫຍ່ ຄັ້ງທີ III ຂອງພັກ):

ການແກ້ໄຂບັນຫາປາກທ້ອງ: ເພິ່ນຖືວ່າກະສິກຳແມ່ນສະໜາມຮົບແນວໜ້າ. ຖ້າບໍ່ສາມາດແກ້ໄຂບັນຫາສະບຽງອາຫານໄດ້, ກໍບໍ່ສາມາດເວົ້າເຖິງການສ້າງສາສັງຄົມນິຍົມໄດ້.

ການສ້າງສະສົມພາຍໃນ: ເພິ່ນວາງແຜນຍຸດທະສາດວ່າ: "ກະສິກຳ-ປ່າໄມ້ ຕ້ອງຮັບໃຊ້ການຫັນເປັນອຸດສະຫະກຳ". ໝາຍຄວາມວ່າ ເອົາຜະລິດພັນຈາກດິນ ແລະ ປ່າ ມາເປັນວັດຖຸດິບໃຫ້ໂຮງງານ, ເອົາການສົ່ງອອກຜະລິດພັນກະສິກຳມາເປັນທຶນຮອນ (Capital Accumulation) ເພື່ອຊື້ເຄື່ອງຈັກ ແລະ ເຕັກໂນໂລຊີຈາກຕ່າງປະເທດ.

ການພັດທະນາຮາກຖານ: ເນັ້ນການສ້າງເສດຖະກິດເມືອງ ແລະ ບ້ານ ໃຫ້ເປັນຫົວໜ່ວຍຍຸດທະສາດ, ສ້າງຄວາມເຂັ້ມແຂງຈາກຮາກຖານຂຶ້ນມາ.

**1.3 ທິດສະດີ 3 ການປະຕິວັດ: ເຄື່ອງມືໃນການສ້າງພື້ນຖານເສດຖະກິດໃໝ່**

ປະທານ ໄກສອນ ພົມວິຫານ ໄດ້ກຳນົດວ່າ ການຈະປ່ຽນແປງເສດຖະກິດໄດ້ ຕ້ອງປະຕິບັດ 3 ການປະຕິວັດໄປພ້ອມໆກັນ ໂດຍມີລັກສະນະດັ່ງນີ້:

ການປະຕິວັດການພົວພັນການຜະລິດ: ແມ່ນການເປີດທາງ. ບໍ່ແມ່ນພຽງແຕ່ການຍຶດກຳມະສິດມາເປັນຂອງລັດ, ແຕ່ແມ່ນການຈັດຕັ້ງຄືນໃໝ່ໃຫ້ຜູ້ອອກແຮງງານໄດ້ຮັບຜົນປະໂຫຍດທີ່ຍຸຕິທຳ (ຜົນປະໂຫຍດ 3 ຢ່າງ).

ການປະຕິວັດເຕັກນິກ-ວິທະຍາສາດ (ເປັນຈຸດໃຈກາງ): ເພິ່ນເນັ້ນໜັກຫຼາຍໃນນິພົນເຫຼັ້ມ 4 ວ່າ ຖ້າປາສະຈາກເຕັກນິກໃໝ່, ພວກເຮົາກໍເປັນພຽງການຜະລິດນ້ອຍແບບຄອບຄົວ. ຕ້ອງຫັນຈາກການເຮັດນາດ້ວຍຄູ່ ມາເປັນການນຳໃຊ້ກົນຈັກ, ຊົນລະປະທານ ແລະ ແນວພັນໃໝ່.

ການປະຕິວັດແນວຄິດ-ວັດທະນະທຳ: ແມ່ນການສ້າງ "ຄົນໃໝ່ສັງຄົມນິຍົມ". ປ່ຽນແປງແນວຄິດ "ຂີ້ຄ້ານມັກງ່າຍ", "ເຮັດພໍແລ້ວມື" ມາເປັນການມີລະບຽບວິນຍານໃນການອອກ

ແຮງງານ, ມີຄວາມຮູ້ທາງດ້ານເຕັກນິກ ແລະ ມີນໍ້າໃຈຮັກຊາດຮັກລະບອບໃໝ່.

**ສະຫຼຸບການເຊື່ອມໂຍງສູ່ການສອນຢູ່ ສມປຊ:**

ໃນການສິດສອນ, ພາກສ່ວນນີ້ຖືເປັນ "ຮາກຖານແນວທາງ". ຄູ-ອາຈານ ຢູ່ ສມປຊ ຈະຕ້ອງຊີ້ໃຫ້ນັກສຶກສາເຫັນວ່າ: ແນວຄິດຂອງເພິ່ນໃນເຫຼັ້ມ 1-4 ບໍ່ແມ່ນສິ່ງທີ່ລ້າສະໄໝ, ແຕ່ແມ່ນ "ວິທີວິທະຍາ" (Methodology) ໃນການເບິ່ງບັນຫາຈາກຄວາມເປັນຈິງ.

ການສອນຕ້ອງເນັ້ນໃຫ້ເຫັນວ່າ ເປັນຫຍັງເພິ່ນຈຶ່ງເລືອກ "ກະສິກໍາ" ກ່ອນ "ອຸດສະຫະກໍາໜັກ"? (ຍ້ອນສອດຄ່ອງກັບກົດເກນພາວະວິໄສຂອງລາວໃນເວລານັ້ນ).

ການສອນ "3 ການປະຕິວັດ" ໃນປັດຈຸບັນ ຕ້ອງປັບໃຫ້ເຂົ້າກັບ"ການຫັນເປັນດີຈີຕອນ" (Digital Transformation) ໂດຍຖືເອົາເຕັກໂນໂລຊີເປັນຕົວຂັບເຄື່ອນຄືກັບທີ່ເພິ່ນເຄີຍເນັ້ນໃສ່ການປະຕິວັດເຕັກນິກໃນອະດີດ.

**2. ວິເຄາະ 5 ພາກສ່ວນເສດຖະກິດ ແລະ ໂຄງປະກອບຂະແໜງການ ບົນພື້ນຖານຈິນຕະນາການໃໝ່**

ການຫັນປ່ຽນຈາກກົນໄກຄຸ້ມຄອງບໍລິຫານເກື້ອກູນ ສູ່ກົນໄກເສດຖະກິດຕະຫຼາດທີ່ມີການຄຸ້ມຄອງຂອງລັດ ຕາມທັດສະນະຂອງປະທານ ໄກສອນ ພົມວິຫານ ແມ່ນການຍອມຮັບຄວາມຈິງພາວະວິໄສທີ່ວ່າ: "ເສດຖະກິດລາວແມ່ນເສດຖະກິດຫຼາຍພາກສ່ວນ".

**2.1 ວິເຄາະທາດແທ້ຂອງ 5 ພາກສ່ວນເສດຖະກິດ**

ເພິ່ນໄດ້ກໍານົດໂຄງປະກອບກໍາມະສິດຢ່າງຈະແຈ້ງ ເພື່ອຈຸດປະສົງດຽວຄື "ປົດປ່ອຍກໍາລັງການຜະລິດ":

ເສດຖະກິດລັດ (State Economy): ເປັນພາກສ່ວນທີ່ຖືບົດບາດເປັນເຈົ້າການ ແລະ ເປັນ "ໄມ້ຫລາ" ໃນການດັດສົມເສດຖະກິດ. ລັດກໍາກຸມບັນດາຂະແໜງການຍຸດທະສາດ (ພະລັງງານ, ທະນາຄານ, ພື້ນຖານໂຄງລ່າງ) ເພື່ອຮັບປະກັນຄວາມໝັ້ນຄົງ ແລະ ທິດທາງສັງຄົມນິຍົມ.

ເສດຖະກິດລວມໝູ່ (Collective Economy): ແມ່ນການຮ່ວມມືບົນພື້ນຖານຄວາມສະໝັກໃຈ (ສະຫະກອນຮູບແບບໃໝ່). ເພິ່ນເນັ້ນວ່າຕ້ອງປ່ຽນຈາກການບັງຄັບມາເປັນການຊຸກຍູ້ໃຫ້ຊາວນາເຫັນຜົນປະໂຫຍດຮ່ວມກັນໃນການນໍາໃຊ້ເຕັກນິກ ແລະ ການຕະຫຼາດ.

ເສດຖະກິດສ່ວນຕົວ-ຊ່າງຫັດຖະກໍາ (Individual & Handicraft): ແມ່ນພາກສ່ວນທີ່ກວ້າງຂວາງທີ່ສຸດ, ກວມເອົາເສດຖະກິດຄອບຄົວ. ເພິ່ນຖືວ່າພາກສ່ວນນີ້ມີຄວາມສໍາຄັນໃນການແກ້ໄຂວຽກເຮັດງານທໍາ ແລະ ຕອບສະໜອງຄວາມຕ້ອງການພື້ນຖານຂອງສັງຄົມ.

ເສດຖະກິດທຶນນິຍົມເອກະຊົນ (Private Capitalist): ນີ້ແມ່ນ "ຈິນຕະນາການໃໝ່" ທີ່ກ້າຫານ. ເພິ່ນເຫັນວ່າທຶນນິຍົມເອກະຊົນ (ທັງພາຍໃນ ແລະ ຕ່າງປະເທດ) ມີບົດບາດສໍາຄັນໃນການນໍາເອົາທຶນ, ເຕັກໂນໂລຊີ ແລະ ວິທີການຄຸ້ມຄອງທີ່ທັນສະໄໝມາພັດທະນາປະເທດ.

ເສດຖະກິດທຶນນິຍົມແຫ່ງລັດ (State Capitalist): ແມ່ນຮູບແບບການຮ່ວມທຶນ (Joint Venture) ລະຫວ່າງລັດກັບ ເອກະຊົນ. ມັນແມ່ນຮູບແບບການເຊື່ອມໂຍງເພື່ອໃຫ້ລັດສາມາດຮຽນຮູ້ການບໍລິຫານ ແລະ ຄວບຄຸມທິດທາງການພັດທະນາໄປພ້ອມໆກັນ.

**2.2 ການພົວພັນແບບ "ກາຍອິນຊີ" ແລະ ການແຂ່ງຂັນທີ່ສະເໝີພາບ**

ຜົນການວິເຄາະຊີ້ໃຫ້ເຫັນວ່າ 5 ພາກສ່ວນນີ້ບໍ່ໄດ້ດໍາລົງຢູ່ແບບໂດດດ່ຽວ, ແຕ່ມີຄວາມສໍາພັນແບບ "ກາຍອິນຊີ":

ການຮ່ວມມື ແລະ ຊ່ວຍໜູນ: ພາກສ່ວນເສດຖະກິດລັດສ້າງເງື່ອນໄຂ (ໄຟຟ້າ, ຖະໜົນ) ໃຫ້ພາກສ່ວນເອກະຊົນຂະຫຍາຍຕົວ.

ການແຂ່ງຂັນ: ທຸກພາກສ່ວນມີຄວາມສະເໝີພາບຕໍ່ໜ້າກົດໝາຍ. ການແຂ່ງຂັນຈະເປັນຕົວຊຸກຍູ້ໃຫ້ແຕ່ລະພາກສ່ວນຕ້ອງປັບປຸງເຕັກນິກ ແລະ ຫຼຸດຜ່ອນຕົ້ນທຶນ, ເຊິ່ງຜູ້ທີ່ໄດ້ຮັບຜົນປະໂຫຍດສູງສຸດແມ່ນ "ຜູ້ບໍລິໂພກ" ແລະ "ປະເທດຊາດ".

ບົດບາດການນໍາພາ: ເສດຖະກິດຕະຫຼາດໃນລາວ ບໍ່ແມ່ນຕະຫຼາດເສລີແບບໄຮ້ທິດທາງ, ແຕ່ແມ່ນຕະຫຼາດທີ່ "ລັດຄຸ້ມຄອງ" ເພື່ອຮັບປະກັນຄວາມຍຸຕິທໍາ ແລະ ຫຼຸດຜ່ອນຄວາມເຫຼື່ອມລໍ້າ.

**2.3 ໂຄງປະກອບຂະແໜງການ: ຍຸດທະສາດການຫັນເປັນອຸດສະຫະກໍາແຕ່ຮາກຖານ**

ການວິເຄາະໂຄງປະກອບຂະແໜງການຕາມແນວຄິດຂອງເພິ່ນ ມີລັກສະນະເປັນລໍາດັບຂັ້ນທີ່ຊັດເຈນ:

ຈາກເສດຖະກິດທໍາມະຊາດ ສູ່ເສດຖະກິດສິນຄ້າ: ປ່ຽນການຜະລິດແບບກຸ້ມຕົນເອງ (ພໍໃຜພໍມັນ) ມາເປັນການຜະລິດເພື່ອຂາຍ. ນີ້ແມ່ນເງື່ອນໄຂເບື້ອງຕົ້ນຂອງການສະສົມທຶນ.

ໂຄງປະກອບ "ກະສິກຳ-ປ່າໄມ້ ຕິດພັນກັບ ອຸດສະຫະກຳ ແລະ ບໍລິການ":

ກະສິກຳ-ປ່າໄມ: ແມ່ນ "ພື້ນຖານ" (Foundation) ເພື່ອສະໜອງສະບຽງອາຫານ ແລະ ວັດຖຸດິບ.

ອຸດສະຫະກຳ: ແມ່ນ "ຫົວຈັກ" (Engine) ທີ່ຕ້ອງເລີ່ມຈາກອຸດສະຫະກຳປຸງແຕ່ງຜະລິດພັນກະສິກຳ ເພື່ອສ້າງມູນຄ່າເພີ່ມ.

ບໍລິການ: ແມ່ນ "ຂົວຕໍ່" (Bridge) ເພື່ອຈໍລະຈອນສິນຄ້າ ແລະ ເຊື່ອມໂຍງກັບສາກົນ.

ການແບ່ງເຂດເສດຖະກິດ: ເພິ່ນໄດ້ເນັ້ນການສ້າງ "ເຂດເສດຖະກິດຈຸດສຸມ" ເພື່ອເປັນຕົວແບບ ແລະ ເປັນກຳລັງດຶງດູດການພັດທະນາໃຫ້ແກ່ເຂດອື່ນໆ.

**ສະຫຼຸບຄວາມສຳຄັນຕໍ່ການຮຽນ-ການສອນຢູ່ ສມປຊ:** ໃນການສິດສອນ, ພາກສ່ວນນີ້ແມ່ນການປ່ຽນ "Mindset" ຂອງພະນັກງານ: ເຊົາອັກຄະຕິຕໍ່ເອກະຊົນ: ສອນໃຫ້ເຫັນວ່າ ພາກສ່ວນເອກະຊົນແມ່ນ "ເພື່ອນຮ່ວມທາງ" ໃນການສ້າງສາປະເທດຊາດ, ບໍ່ແມ່ນເປົ້າໝາຍທີ່ຈະຖືກລຶບລ້າງ.

ເຂົ້າໃຈບົດບາດຂອງລັດ: ລັດບໍ່ໄດ້ເຮັດທຸລະກິດແຂ່ງກັບປະຊາຊົນໃນທຸກຢ່າງ, ແຕ່ລັດຕ້ອງເປັນຜູ້ອຳນວຍຄວາມສະດວກ ແລະ ຜູ້ກຳນົດລະບຽບ.

ຄວາມສອດຄ່ອງກັບປັດຈຸບັນ: ການສອນເລື່ອງ 5 ພາກສ່ວນເສດຖະກິດໃນປັດຈຸບັນ ຕ້ອງເຊື່ອມໂຍງກັບການສົ່ງເສີມ SME ແລະ ການດຶງດູດການລົງທຶນຈາກຕ່າງປະເທດ (FDI) ທີ່ປະທານ ໄກສອນ ພົມວິຫານ ໄດ້ວາງຮາກຖານໄວ້ຕັ້ງແຕ່ປີ 1986.

**3. ການຕີລາຄາການໝູນໃຊ້ແນວຄິດເສດຖະກິດ ໄກສອນ ພົມວິຫານ ເຂົ້າໃນການຮຽນ-ການສອນ ແລະ ການຄົ້ນຄວ້າ ຢູ່ ສມປຊ**

ຜ່ານການວິໄຈ ແລະ ປະເມີນພຶດຕິກຳການສິດສອນຕົວຈິງຢູ່ ສມປຊ ໃນໄລຍະຜ່ານມາ, ສາມາດຕີລາຄາດ້ານດີທີ່ເປັນພື້ນຖານສຳຄັນ ຄືການທີ່ສະຖາບັນສາມາດສ້າງພື້ນຖານແນວຄິດການເມືອງທີ່ໝັ້ນຄົງ ແລະ ໜັກແໜ້ນໃຫ້ແກ່ນັກສຶກສາ ເຊິ່ງສ່ວນໃຫຍ່ແມ່ນພະນັກງານນຳພາ-ຄຸ້ມຄອງ ໃຫ້ມີຄວາມເຊື່ອໝັ້ນຕໍ່ແນວທາງການປ່ຽນແປງໃໝ່ຂອງພັກ. ຫຼັກສູດການສອນມີຄວາມເປັນເອກະພາບສູງ ໂດຍມີການກຳນົດລະບົບນິພົນອ້າງອີງຈາກຕົ້ນສະບັບຂອງປະທານ ໄກສອນ ພົມວິຫານ ຢ່າງຊັດເຈນ, ເຮັດໃຫ້ການຖ່າຍທອດຄວາມຮູ້ນັ້ນມີຄວາມຖືກຕ້ອງຕາມຫຼັກການທິດສະດີມາກ-ເລນິນ ແລະ ສອດຄ່ອງກັບຈຸດພິເສດຂອງຊາດ.

ນອກຈາກນັ້ນ, ໃນວຽກງານຄົ້ນຄວ້າວິທະຍາ ສາດ, ສະຖາບັນກໍໄດ້ຊຸກຍູ້ໃຫ້ມີການຫັນເອົາບັນດາເນື້ອໃນສຳຄັນໃນນິພົນຂອງເພິ່ນ ມາເປັນຫົວຂໍ້ວິໄຈໃນລະດັບຕ່າງໆຢ່າງກວ້າງຂວາງ, ເຊິ່ງເປັນການເປີດໂອກາດໃຫ້ຄູ-ອາຈານ ແລະ ນັກສຶກສາ ໄດ້ລົງເລິກວິເຄາະທັດສະນະຂອງເພິ່ນໃນຫຼາຍມິຕິ ເພື່ອເປັນບ່ອນອີງໃນການວາງນະໂຍບາຍພັດທະນາເສດຖະ ກິດ-ສັງຄົມ.

ເຖິງຢ່າງໃດກໍຕາມ, ຜົນການສຶກສາກໍໄດ້ຊີ້ໃຫ້ເຫັນເຖິງບາງຈຸດບົກຜ່ອງ ແລະ ຂໍ້ຄົງຄ້າງທີ່ຕ້ອງໄດ້ຮັບການແກ້ໄຂຢ່າງຮີບດ່ວນ, ໂດຍສະເພາະແມ່ນການເຊື່ອມໂຍງລະຫວ່າງທິດສະດີພື້ນຖານ ກັບບັນຫາເສດຖະກິດຮ່ວມສະໄໝທີ່ພວມພັນແປຢ່າງໄວວາ. ໃນປັດຈຸບັນ, ການນຳໃຊ້ແນວຄິດຂອງເພິ່ນເຂົ້າໃນການວິເຄາະເສດຖະກິດຍຸກດິຈິຕອນ (Digital Economy), ການຄ້າແບບອີເລັກໂຕຼນິກ ຫຼື ການຄຸ້ມຄອງເງິນຕາໃນຍຸກໂລກາພິວັດ ແມ່ນຍັງມີລັກສະນະຈຳກັດ ແລະ ບໍ່ທັນເລິກເຊິ່ງເທົ່າທີ່ຄວນ. ໃນຂະນະດຽວກັນ, ຮູບແບບການສິດສອນບາງສ່ວນຍັງມີລັກສະນະເນັ້ນການບັນຍາຍທາງດ້ານທິດສະດີແບບທາງດຽວ (Passive Learning) ເປັນສ່ວນໃຫຍ່, ເຮັດໃຫ້ນັກສຶກສາຍັງຂາດໂອກາດໃນການຝຶກຝົນທັກສະການວິເຄາະບັນຫາຕົວຈິງ ຫຼື ການນຳໃຊ້ "ວິທີວິທະຍາ" ຂອງເພິ່ນມາຊອກຫາທາງອອກໃຫ້ແກ່ວິກິດການເສດຖະກິດທີ່ເກີດຂຶ້ນໃນທ້ອງຖິ່ນ ຫຼື ຂະແໜງການຂອງຕົນ.

ນອກຈາກນີ້, ໃນດ້ານວຽກງານຄົ້ນຄວ້າວິທະຍາສາດ, ພົບວ່າບົດວິໄຈບາງສະບັບຍັງຕິດພັນກັບຮູບແບບການພรรณນາທິດສະດີຕາມຕົວອັກສອນຫຼາຍເກີນໄປ ໂດຍບໍ່ທັນສາມາດຖອດຖອນເປັນບົດຮຽນພາກປະຕິບັດທີ່ "ຈັບຕ້ອງໄດ້". ຂໍ້ຄົງຄ້າງທີ່ສຳຄັນແມ່ນການຂາດບົດສະເໜີທາງອອກທີ່ເປັນຮູບປະທຳ ແລະ ມີລັກສະນະວິທະຍາສາດພຽງພໍ ເພື່ອສົ່ງໃຫ້ລັດຖະບານ ຫຼື ພາກສ່ວນທີ່ກ່ຽວຂ້ອງນຳໄປໃຊ້ໃນການແກ້ໄຂບັນຫາເສດຖະກິດມະຫາພາກ ເຊັ່ນ: ບັນຫາເງິນເຟີ້ ຫຼື ການຄຸ້ມຄອງໜີ້ສິນ. ສິ່ງເຫຼົ່ານີ້ສະທ້ອນໃຫ້ເຫັນວ່າ ການໝູນໃຊ້ແນວຄິດຂອງເພິ່ນໃນໄລຍະຜ່ານມາ ແມ່ນຍັງເນັ້ນໜັກການ "ຮຽນຮູ້ເພື່ອຈົດຈຳ" ຫຼາຍກວ່າການ "ຮຽນຮູ້ເພື່ອພັນຂະຫຍາຍ" ໃຫ້ສອດຄ່ອງກັບສະພາບການປ່ຽນແປງຂອງໂລກ ແລະ ຄວາມຕ້ອງການຕົວຈິງຂອງສັງຄົມໃນຍຸກໃໝ່.

### 4. ສິ່ງທ້າທາຍ ແລະ ທິດທາງການປັບປຸງການໝູນໃຊ້ແນວຄິດເສດຖະກິດໃນຕໍ່ໜ້າ

ຈາກການວິເຄາະສະພາບການຜັນແປຂອງຍຸກສະໄໝ, ພົບວ່າ ສິ່ງທ້າທາຍອັນໃຫຍ່ຫຼວງ ທີ່ ສມປຊ ພວມປະເຊີນແມ່ນ ຄວາມຜັນຜວນຢ່າງຮຸນແຮງຂອງເສດຖະກິດໂລກ ທີ່ສົ່ງຜົນກະທົບໂດຍກົງຕໍ່ສະເຖຍລະພາບມະຫາພາກຂອງ ສປປ ລາວ ເຊັ່ນ: ບັນຫາເງິນເຟີ້, ການອ່ອນຄ່າຂອງເງິນຕາ ແລະ ພາລະໜີ້ສິນສາກົນ. ສິ່ງເຫຼົ່ານີ້ຮຽກຮ້ອງໃຫ້ການຕີຄວາມໝາຍ ແລະ ການໝູນໃຊ້ແນວຄິດເສດຖະກິດຂອງ ປະທານ ໄກສອນ ພົມວິຫານ ຕ້ອງກ້າວຂ້າມການທ່ອງຈໍາເນື້ອໃນໃນນິພົນ ໄປສູ່ການສ້າງ "ຈິນຕະນາການໃໝ່" ທີ່ມີຄວາມທັນສະໄໝ ແລະ ສາມາດນໍາໃຊ້ເປັນເຄື່ອງມືແກ້ໄຂບັນຫາໄດ້ຈິງ. ຖ້າພວກເຮົາບໍ່ສາມາດເຊື່ອມໂຍງ "ວິທີວິທະຍາ" ຂອງເພິ່ນເຂົ້າກັບກົນໄກເສດຖະກິດຍຸກໃໝ່ໄດ້, ທິດສະດີທີ່ມີຄຸນຄ່າເຫຼົ່ານັ້ນກໍຈະກາຍເປັນພຽງບົດຮຽນທາງປະຫວັດສາດ ທີ່ບໍ່ສາມາດຕອບໂຈດການພັດທະນາໃນປັດຈຸບັນໄດ້.

ເພື່ອເອົາຊະນະສິ່ງທ້າທາຍດັ່ງກ່າວ, ທິດທາງການປັບປຸງໃນຕໍ່ໜ້າ ຕ້ອງໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນລະບົບ ໂດຍເລີ່ມຈາກ ການພັດທະນາບຸກຄະລາກອນຄູ ໃຫ້ກາຍເປັນ "ນັກວິ ທະຍາສາດການເມືອງ-ເສດຖະສາດ" ຢ່າງແທ້ຈິງ. ຄູ-ອາຈານຕ້ອງບໍ່ພຽງແຕ່ກໍາແໜ້ນບັນດາຄໍາສອນໃນນິພົນຢ່າງເລິກເຊິ່ງເທົ່ານັ້ນ, ແຕ່ຕ້ອງມີຄວາມຮູ້ຄວາມເຂົ້າໃຈກ່ຽວກັບກົນໄກຕະຫຼາດສາກົນ, ເຕັກໂນໂລຊີດິຈິຕອນ ແລະ ທ່າອ່ຽງເສດຖະກິດໂລກ ເພື່ອໃຫ້ສາມາດຖ່າຍທອດແນວຄິດຂອງເພິ່ນໃຫ້ມີຊີວິດຊີວາ ແລະ ແທດເໝາະກັບຍຸກສະໄໝ. ການສ້າງຄູໃຫ້ເປັນນັກວິໄຈ ຈະຊ່ວຍໃຫ້ການສອນມີຄວາມໜັກແໜ້ນດ້ວຍຂໍ້ມູນຕົວຈິງ ແລະ ສາມາດຕັ້ງຄໍາຖາມທີ່ທ້າທາຍສະຕິປັນຍາຂອງນັກສຶກສາໄດ້ຫຼາຍຂຶ້ນ.

ໃນດ້ານ ຮູບແບບການສອນ, ຕ້ອງມີການຫັນປ່ຽນຢ່າງຂຶດຂັ້ນຈາກການ "ບອກເລົ່າທິດສະດີ" ມາເປັນການ "ຕັ້ງບັນຫາ ແລະ ວິໄຈ (Case Study Based Learning)". ສມປຊ ຄວນນໍາເອົາບັນຫາເສດຖະກິດທີ່ພວມເກີດຂຶ້ນຕົວຈິງ ເຊັ່ນ: ວິກິດການເງິນຕາ ຫຼື ການຄຸ້ມຄອງວິສາຫະກິດລັດ ມາເປັນໂຈດໃນຫ້ອງຮຽນ ແລ້ວຊຸກຍູ້ໃຫ້ນັກສຶກສານໍາໃຊ້ "ວິທີວິທະຍາ" ຂອງເພິ່ນໃນການວິເຄາະຫາສາເຫດ ແລະ ຊອກຫາທາງອອກ. ການຮຽນ-ການສອນໃນຮູບແບບນີ້ ຈະຊ່ວຍປູກຝັງທັກສະການຄິດວິເຄາະ ແລະ ເຮັດໃຫ້ນັກສຶກສາເຫັນວ່າ ແນວຄິດຂອງເພິ່ນແມ່ນ "ເຂັມທິດ" ທີ່ສາມາດນໍາທາງໃນການຕັດສິນໃຈບໍລິຫານລັດ ແລະ ເສດຖະກິດໄດ້ຢ່າງມີປະສິດທິພາບ.

ສຸດທ້າຍ, ການປັບປຸງຫຼັກສູດ ແມ່ນປັດໃຈຕັດສິນ ໂດຍການເພີ່ມເນື້ອໃນທີ່ຕິດພັນກັບການຄຸ້ມຄອງເສດຖະກິດມະຫາພາກ, ການຄຸ້ມຄອງລັດດ້ວຍກົດໝາຍ ແລະ ຍຸດທະສາດການຫັນເປັນເສດຖະກິດດິຈິຕອນ. ການປັບປຸງນີ້ຕ້ອງຍຶດຖື "ຈິດວິນຍານ" ແຫ່ງການປ່ຽນແປງໃໝ່ຂອງປະທານ ໄກສອນ ພົມວິຫານ ທີ່ເນັ້ນການບຸກທະລຸທາງດ້ານຈິນຕະນາການ ແລະ ການກ້າປ່ຽນແປງສິ່ງທີ່ບໍ່ສອດຄ່ອງ. ຫຼັກສູດໃໝ່ຕ້ອງເນັ້ນໃສ່ການສ້າງບຸກຄະລາກອນ ທີ່ມີທັງຄຸນສົມບັດສິນທໍາປະຕິວັດ ແລະ ມີຄວາມສາມາດທາງດ້ານວິຊາສະເພາະທີ່ທັນສະໄໝ ເພື່ອເປັນກໍາລັງແຮງຫຼັກໃນການພາປະເທດຊາດຜ່ານພົ້ນຄວາມຫຍຸ້ງຍາກ ແລະ ກ້າວໄປສູ່ຈຸດໝາຍສັງຄົມນິຍົມຢ່າງໝັ້ນຄົງ.

**ອະພິປາຍຜົນ**

ຈາກຜົນການສຶກສາທັງ 4 ປະເດັນ, ພວກເຮົາສາມາດສະຫຼຸບ ແລະ ອະພິປາຍໄດ້ວ່າ ແນວຄິດເສດຖະກິດຂອງປະທານ ໄກສອນ ພົມວິຫານ ບໍ່ແມ່ນພຽງແຕ່ທິດສະດີທີ່ຄົງຕົວຢູ່ໃນໜ້າເຈ້ຍ, ແຕ່ແມ່ນ "ເຂັມທິດທີ່ມີຊີວິດ" ທີ່ໄດ້ຮັບການພິສູດຜ່ານພຶດຕິກໍາຕົວຈິງ. ເຊິ່ງມີປະເດັນທີ່ຄວນຍົກຂຶ້ນມາສົນທະນາດັ່ງນີ້:

1. ຈາກຄວາມເຂົ້າໃຈກົດເກນສູ່ການ "ປົດປ່ອຍ" ກໍາລັງການຜະລິດຜົນການສຶກສາໃນນິພົນເຫຼັ້ມ 1-4 ຊີ້ໃຫ້ເຫັນວ່າ ປະທານ ໄກສອນ ພົມວິຫານ ແມ່ນ ນັກທິດສະດີທີ່ຍຶດໝັ້ນໃນຄວາມເປັນຈິງ (Pragmatist). ການທີ່ເພິ່ນໝູນໃຊ້ກົດເກນຄວາມສອດຄ່ອງລະຫວ່າງການພົວພັນການຜະລິດ ແລະ ກໍາລັງການຜະລິດນັ້ນ ແມ່ນບາດກ້າວບຸກທະລຸທີ່ສໍາຄັນ. ໃນຂະນະທີ່ຫຼາຍປະເທດໃນເວລານັ້ນອາດຈະຟ້າວຟັ່ງສ້າງສັງຄົມນິຍົມແບບລວມສູນ, ແຕ່ເພິ່ນກັບເບິ່ງຄືນຫາຮາກເຫງົ້າຂອງລາວວ່າ "ເຮົາຍັງຫຼ້າຫຼັງ". ການເລືອກເອົາ ກະສິກໍາ-ປ່າໄມ້ ເປັນພື້ນຖານ ບໍ່ແມ່ນການຖອຍຫຼັງ, ແຕ່ແມ່ນການ "ຢຽບດິນໃຫ້ແໜ້ນກ່ອນ

ຈະກ້າວ". ສິ່ງນີ້ສອນໃຫ້ພວກເຮົາຮູ້ວ່າ: ການພັດທະນາເສດຖະກິດໃດໆກໍຕາມ ຖ້າບໍ່ເລີ່ມຈາກທ່າແຮງທີ່ແທ້ຈິງຂອງຊາດ, ການພັດທະນານັ້ນຈະບໍ່ຍືນຍົງ.

2. ໂຄງປະກອບ 5 ພາກສ່ວນ: ຍຸດທະສາດການສ້າງ "ກາຍອິນຊີ" ທາງເສດຖະກິດການວິເຄາະ 5 ພາກສ່ວນເສດຖະກິດບົນພື້ນຖານຈິນຕະນາການໃໝ່ ສະທ້ອນໃຫ້ເຫັນເຖິງ ວິໄສທັດການຢູ່ຮ່ວມກັນ. ເພິ່ນບໍ່ໄດ້ເບິ່ງເອກະຊົນເປັນ "ສັດຕູ" ຂອງສັງຄົມນິຍົມ, ແຕ່ເບິ່ງເປັນ "ກຳ ລັງແຮງ" ທີ່ລັດຕ້ອງນຳໃຊ້ ແລະ ຄຸ້ມຄອງ.

ຄຳວ່າ "ພົວພັນກັນແບບກາຍອິນຊີ" ແມ່ນຈຸດສຳຄັນທີ່ສຸດ; ມັນໝາຍຄວາມວ່າ ຖ້າພາກສ່ວນໃດໜຶ່ງເຈັບປວດ (ເຊັ່ນ: SME ອ່ອນແອ), ທັງລະບົບເສດຖະກິດກໍຈະໄດ້ຮັບຜົນກະທົບ. ນີ້ແມ່ນບົດຮຽນທີ່ລ້ຳຄ່າສຳລັບພະນັກງານຄຸ້ມຄອງເສດຖະກິດໃນປັດຈຸບັນ ທີ່ຕ້ອງສ້າງສະພາບແວດລ້ອມໃຫ້ທຸກພາກສ່ວນ "ແຂ່ງຂັນຢ່າງສະເໝີພາບ" ພາຍໃຕ້ການກຳນົດທິດຂອງລັດ.

3. ຊ່ອງວ່າງລະຫວ່າງ "ທິດສະດີ" ແລະ "ຍຸກດິຈິຕອນ"

ຈຸດທີ່ໜ້າສົນໃຈ ແລະ ທ້າທາຍທີ່ສຸດຈາກຜົນການສຶກສາ ຄືການຕີລາຄາການສອນຢູ່ ສມປຊ. ເຖິງວ່າພວກເຮົາຈະມີພື້ນຖານທິດສະດີທີ່ໜັກແໜ້ນ, ແຕ່ "ວິທີການຖ່າຍທອດ" ຍັງຕິດພັນກັບຮູບແບບເກົ່າ (Passive Learning). ການທີ່ບົດວິໄຈຍັງມີລັກສະນະພรรณນາທິດສະດີຫຼາຍເກີນໄປນັ້ນ ສະທ້ອນໃຫ້ເຫັນວ່າ ພວກເຮົາພວມຮຽນ "ປະຫວັດສາດຂອງແນວຄິດ" ຫຼາຍກວ່າຮຽນ "ວິທີການຄິດ". ໃນຍຸກທີ່ໂລກພວມປ່ຽນສູ່ເສດຖະກິດດິຈິຕອນ, ຄວາມທ້າທາຍບໍ່ແມ່ນການຊອກຫາທິດສະດີໃໝ່, ແຕ່ແມ່ນການ "Re-brand" ແນວຄິດ ໄກສອນ ພົມວິຫານ ໃຫ້ກາຍເປັນພາສາຂອງຄົນລຸ້ນໃໝ່. ຕົວຢ່າງ: ການປະຕິວັດເຕັກນິກໃນເມື່ອກ່ອນ ຄືການໃຊ້ລົດໄຖນາ, ແຕ່ໃນປັດຈຸບັນ ມັນຄືການໃຊ້ AI ແລະ Big Data ເພື່ອຄຸ້ມຄອງເສດຖະກິດ.

4. ການສ້າງ "ນັກວິທະຍາສາດ" ແທນ "ນັກບັນຍາຍ" ທິດທາງການປັບປຸງໃນຕໍ່ໜ້າທີ່ຍົກຂຶ້ນມານັ້ນຖືວ່າຖືກຈຸດ. ການປ່ຽນຄູໃຫ້ເປັນ "ນັກວິທະຍາສາດ" ໝາຍເຖິງການເຮັດໃຫ້ຄູເປັນຜູ້ທີ່ກ້າຕັ້ງຄຳຖາມກັບບັນຫາສັງຄົມ. ການໃຊ້ Case Study Based ຈະເຮັດໃຫ້ນັກສຶກສາເຫັນວ່າ "ແນວຄິດໄກສອນ" ສາມາດແກ້ໄຂບັນຫາເງິນເຟີ້ໃນປີ 2024-2026 ໄດ້ແນວໃດ. ຖ້າພວກເຮົາສາມາດເຮັດສິ່ງນີ້ໄດ້, ສມປຊ ຈະບໍ່ແມ່ນພຽງບ່ອນຮຽນທິດສະດີການເມືອງ, ແຕ່ຈະເປັນ "Think Tank" (ສູນລວມປັນຍາ) ທີ່ສຳຄັນຂອງປະເທດຊາດ.

**ບົດສະຫຼຸບການອະພິປາຍ**

ການສຶກສາຄັ້ງນີ້ຢືນຢັນວ່າ ແນວຄິດເສດຖະກິດໄກສອນ ພົມວິຫານ ມີລັກສະນະວິທະຍາສາດ ແລະ ທັນສະໄໝສະເໝີ. ຂໍ້ຄົງຄ້າງບໍ່ໄດ້ຢູ່ທີ່ຕົວທິດສະດີ, ແຕ່ຢູ່ທີ່ "ຂະບວນການໝູນໃຊ້". ດັ່ງນັ້ນ, ການຫັນປ່ຽນວິທີການຮຽນ-ການສອນ ໃຫ້ເປັນການວິເຄາະບັນຫາຕົວຈິງ ໂດຍຍຶດຖື "ຈິດວິນຍານບຸກທະລຸ" ຂອງເພິ່ນ ຈະແມ່ນກຸນແຈສຳຄັນໃນການສ້າງບຸກຄະລາກອນຄຸ້ມຄອງເສດຖະກິດ ທີ່ສາມາດພາຊາດຜ່ານພົ້ນວິກິດການໃນປັດຈຸບັນໄດ້.

**ສະຫຼຸບ ແລະ ຂໍ້ສະເໜີແນະ**

**ສະຫຼຸບ**

ຜົນການສຶກສາກ່ຽວກັບການໝູນໃຊ້ແນວຄິດເສດຖະກິດຂອງ ປະທານ ໄກສອນ ພົມວິຫານ ຢູ່ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ (ສມປຊ) ສາມາດສັງລວມອອກເປັນບັນດາພາລະກຣາບທີ່ເນັ້ນເນື້ອໃນສຳຄັນດັ່ງນີ້:

**ພື້ນຖານທິດສະດີ ແລະ ຍຸດທະສາດການພັດທະນາ**

ພື້ນຖານທິດສະດີເສດຖະກິດໃນນິພົນເລືອກເຟັ້ນ ເຫຼັ້ມ 1 ຫາ 4 ແມ່ນການວາງຮາກຖານທີ່ມີລັກສະນະວິທະຍາສາດ ແລະ ປະດິດສ້າງ ໂດຍເນັ້ນໃສ່ການໝູນໃຊ້ບັນດາກົດເກນພາວະວິໄສໃຫ້ສອດຄ່ອງກັບລະດັບການຂະຫຍາຍຕົວຂອງກຳລັງການຜະລິດທີ່ຍັງຫຼ້າຫຼັງໃນລາວ. ເນື້ອໃນສຳຄັນແມ່ນການປ່ຽນແປງຈາກກົນໄກບໍລິຫານເກື້ອກູນທີ່ເຄີຍບົບຮັດການຜະລິດ ໄປສູ່ການເຄົາລົບກົດເກນເສດຖະກິດສິນຄ້າ ເພື່ອປົດປ່ອຍກຳລັງການຜະລິດຢ່າງແທ້ຈິງ. ຍຸດທະສາດທີ່ໂດດເດັ່ນແມ່ນການຖືເອົາ "ກະສິກຳ-ປ່າໄມ້ ເປັນພື້ນຖານ" ເພື່ອແກ້ໄຂບັນຫາປາກທ້ອງ ແລະ ສ້າງທຶນຮອນສະສົມໃຫ້ແກ່ການຫັນເປັນອຸດສະຫະກຳ ແລະ ທັນສະໄໝໃນໄລຍະຕໍ່ມາ. ນອກຈາກນັ້ນ, "3 ການປະຕິວັດ" ໂດຍສະເພາະການປະຕິວັດເຕັກນິກ-ວິທະຍາສາດ ໄດ້ຖືກກຳນົດເປັນເຄື່ອງມືຫຼັກໃນການສ້າງພື້ນຖານເສດຖະກິດໃໝ່ທີ່ທັນສະໄໝ.

**ໂຄງປະກອບເສດຖະກິດ ແລະ ຈິນຕະນາການໃໝ່**

ບົນພື້ນຖານຈິນຕະນາການໃໝ່, ໂຄງປະກອບເສດຖະກິດໃນໄລຍະຂ້າມຜ່ານໄດ້ຖືກກຳນົດໃຫ້ເປັນເສດຖະກິດຫຼາຍພາກສ່ວນ ເຊິ່ງປະກອບມີ 5 ພາກສ່ວນຫຼັກ ຄື: ເສດຖະກິດລັດ,

ລວມໝູ່, ສ່ວນຕົວ-ຊ່າງຫັດຖະກຳ, ທຶນນິຍົມເອກະຊົນ ແລະ ທຶນນິຍົມແຫ່ງລັດ. ບັນດາພາກສ່ວນເຫຼົ່ານີ້ບໍ່ໄດ້ຄົງຕົວແບບໂດດດ່ຽວ ແຕ່ມີການພົວພັນກັນແບບ "ກາຍອິນຊີ" ໂດຍມີການຮ່ວມມື ແລະ ແຂ່ງຂັນກັນຢ່າງສະເໝີພາບຕໍ່ໜ້າກົດໝາຍ ໂດຍມີເສດຖະກິດລັດເປັນເຈົ້າການນຳພາ. ຍຸດທະສາດນີ້ມີເປົ້າໝາຍເພື່ອຫັນປ່ຽນເສດຖະກິດທຳມະຊາດໄປສູ່ເສດຖະກິດສິນຄ້າ ໂດຍການສ້າງໂຄງປະກອບທີ່ຕິດພັນກັນລະຫວ່າງ ກະສິກຳ-ປ່າໄມ້, ອຸດສະຫະກຳ ແລະ ການບໍລິການ ໃຫ້ມີຄວາມເຂັ້ມແຂງແຕ່ຮາກຖານຂຶ້ນມາ.

### ສະພາບການໝູນໃຊ້ ແລະ ສິ່ງທ້າທາຍຢູ່ ສມປຊ

ໃນໄລຍະຜ່ານມາ, ສມປຊ ໄດ້ໝູນໃຊ້ແນວຄິດດັ່ງກ່າວເຂົ້າໃນຫຼັກສູດການຮຽນ-ການສອນລະບົບປະລິນຍາໂທ ແລະ ລະບົບບຳລຸງຢ່າງເປັນລະບົບ ເຊິ່ງຊ່ວຍສ້າງພື້ນຖານແນວຄິດການເມືອງທີ່ໜັກແໜ້ນໃຫ້ແກ່ນັກສຶກສາ. ເຖິງຢ່າງໃດກໍຕາມ, ການສຶກສາພົບວ່າຍັງມີຂໍ້ຄົງຄ້າງດ້ານຮູບແບບການສອນທີ່ຍັງເນັ້ນການບັນຍາຍຝ່າຍດຽວ (Passive Learning) ແລະ ບົດວິໄຈບາງສະບັບຍັງເນັ້ນພຽງການພັນລະນາທິດສະດີຕາມຕົວອັກສອນ ໂດຍຂາດບົດສະເໜີທາງອອກທີ່ເປັນຮູບປະທຳສຳລັບບັນຫາເສດຖະກິດຮ່ວມສະໄໝ. ນອກຈາກນີ້, ຍັງມີສິ່ງທ້າທາຍຈາກຄວາມແຕກໂຕນດ້ານຄວາມຮູ້ພື້ນຖານຂອງນັກສຶກສາ, ງົບປະມານການວິໄຈທີ່ຈຳກັດ ແລະ ພາລະໜ້າທີ່ຄວບຄູ່ຂອງຄູ-ອາຈານ ທີ່ເຮັດໃຫ້ການຄົ້ນຄວ້າບໍ່ໄດ້ເຕັມເມັດເຕັມໜ່ວຍ.

### ທິດທາງການປັບປຸງ ແລະ ການພັດທະນາໃນຕໍ່ໜ້າ

ເພື່ອຍົກສູງປະສິດທິພາບໃນຕໍ່ໜ້າ, ບົດຄົ້ນຄວ້າໄດ້ສະເໜີໃຫ້ມີການພັດທະນາບຸກຄະລາກອນຄູໃຫ້ກາຍເປັນ "ນັກວິໄຈມືອາຊີບ" ທີ່ສາມາດກຳແໜ້ນທັງທິດສະດີ ແລະ ພຶດຕິກຳຕົວຈິງຂອງເສດຖະກິດໂລກ. ຮູບແບບການສິດສອນຄວນຫັນປ່ຽນໄປສູ່ການສຳມະນາ ແລະ ການຍົກກໍລະນີສຶກສາ (Case Study) ທີ່ທັນສະໄໝ ເພື່ອໃຫ້ນັກສຶກສາສາມາດນຳໃຊ້ວິທີວິທະຍາຂອງເພິ່ນມາແກ້ໄຂບັນຫາຕົວຈິງ ເຊັ່ນ: ບັນຫາເງິນເຟີ້ ແລະ ວິກິດການເງິນຕາ. ສິ່ງທີ່ສຳຄັນແມ່ນການເຊື່ອມຊຶມແນວຄິດເສດຖະ ກິດຂອງເພິ່ນໃຫ້ເຂົ້າກັບຍຸກເສດຖະກິດດິຈິຕອນ ແລະ ການເຊື່ອມໂຍງພາກພື້ນ ເພື່ອຮັບປະກັນວ່າທິດສະດີຂອງເພິ່ນຈະຍັງຄົງເປັນເຂັມທິດທີ່ຊັດເຈນໃນການນຳພາປະເທດຊາດໄປສູ່ຈຸດໝາຍສັງຄົມນິຍົມຢ່າງໝັ້ນຄົງ.

### ຂໍ້ສະເໜີແນະໃນຕໍ່ໜ້າ

ເພື່ອຍົກສູງຄຸນນະພາບການສຶກສາ, ຄວນສຸມໃສ່ 4 ດ້ານຫຼັກ:

1. ພັດທະນາວິຊາສະເພາະໃຫ້ຄູເສດຖະກິດ ໂດຍການບຳລຸງສ້າງໃຫ້ກາຍເປັນນັກຄົ້ນຄວ້າຢ່າງມືອາຊີບ ທີ່ກຳແໜ້ນທິດສະດີ ແລະ ພຶດຕິກຳຕົວຈິງ.
2. ປັບປຸງຮູບແບບການສິດສອນໃຫ້ມີການສຳມະນາ ແລະ ແລກປ່ຽນບົດຮຽນຕົວຈິງຫຼາຍຂຶ້ນ ໂດຍການຍົກກໍລະນີສຶກສາ (Case Study) ຂອງວິສາຫະກິດ.
3. ເຊື່ອມຊຶມວຽກງານນະໂຍບາຍເສດຖະກິດ-ການເງິນ ໃຫ້ແທດເໝາະກັບແນວຄິດຂອງເພິ່ນໃນຍຸກເສດຖະກິດດິຈິຕອນ ແລະ ການເຊື່ອມໂຍງພາກພື້ນ.
4. ກຳນົດສັດສ່ວນການໝູນໃຊ້ແນວຄິດເສດຖະກິດເຂົ້າໃນແຕ່ລະວິຊາໃຫ້ຊັດເຈນ ແລະ ເປັນເອກະພາບໃນທຸກຫຼັກສູດ ເພື່ອຮັບປະກັນຄຸນນະພາບຂອງການຮຽນ-ການສອນ.

### ເອກະສານອ້າງອີງ


ໄກສອນ ພົມວິຫານ (1985-2010), *ນິພົນເລືອກເຟັ້ນ ເຫຼັ້ມ 1 ຫາ 4*, ສຳນັກພິມຈຳໜ່າຍແຫ່ງລັດ, ວຽງຈັນ.

ຄະນະໂຄສະນາອົບຮົມສູນກາງພັກ (2010), *ຊີວິດ ແລະ ພາລະກິດ ຂອງປະທານ ໄກສອນ ພົມວິຫານ.*

ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ (2022), *ຫຼັກສູດປະລິນຍາໂທ ສາຂາເສດຖະສາດການເມືອງ.*

ໄກສອນ ຈັນສີນາ (2024), *ການໝູນໃຊ້ແນວຄິດເສດຖະກິດໃນນິພົນ ໄກສອນ ພົມວິຫານ*, ສມປຊ.

Phomvihane, K. (1991). *Renovation in Laos*. Vientiane: State Publishing House.

Stuart-Fox, M. (2008). *Historical Dictionary of Laos*. Scarecrow Press.

Bourdet, Y. (2000). *The Economics of Transition in Laos*. Edward Elgar Publishing.